ກໍລະກົດ
2020

**ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ**
ສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບໂຄງສ້າງເສດຖະກິດ

# ບົດປະເມີນ

## ສະພາບເສດຖະກິດມະຫາພາກຂອງ ສປປ ລາວ 6 ເດືອນຕົ້ນປີ 2020 ໃນໄລຍະການແຜ່ລະບາດຂອງພະຍາດ COVID-19

**ຈັດພິມໂດຍ:**
ສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບໂຄງສ້າງເສດຖະກິດ
ຫ້ອງ 6, ຖະໜົນໄກສອນພົມວິຫານ
ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ
ໂທລະສັບ ແລະ ແຟັກ: + 856 21 713034

**ປີຈັດພິມ:** ກໍລະກົດ 2020

**©ສຄສຊ** ສະຫງວນລິຂະສິດ 2020 ບົດລາຍງານສະບັບນີ້ ແມ່ນຜະລິດຕະພັນຂອງນັກຄົ້ນຄວ້າໃນສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບໂຄງສ້າງເສດຖະກິດ. ຜົນການຄົ້ນຄວ້າ, ການຕີລາຄາ ແລະ ຂໍ້ສະຫຼຸບໃນບົດລາຍງານສະບັບນີ້ ອາດບໍ່ສ່ອງແສງໄດ້ທັງໝົດເຖິງທັດສະນະຂອງຄະນະສູນ ຫຼື ຂອງສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ.

# ຄຳເຫັນຂອງຫົວໜ້າ
## ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ

ໄລຍະ 6 ເດືອນຕົ້ນປີ 2020 ຜ່ານມານີ້ ໄດ້ມີຫຼາຍເຫດການທີ່ພົ້ນເດັ່ນຢູ່ສາກົນ ແລະ ພາກພື້ນ ທີ່ຍັງເປັນສິ່ງທ້າທາຍຕໍ່ການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໂດຍສະເພາະ ການແຜ່ລະບາດຂອງພະຍາດ COVID-19 ທີ່ເຮັດໃຫ້ເສດຖະກິດແຫ່ງຊາດ ໃນປີ 2020 ອາດຂະຫຍາຍຕົວຕໍ່າສຸດໃນຮອບຫຼາຍທົດສະວັດຜ່ານມາ. ເຖິງຢ່າງໃດກໍຕາມ, ຍ້ອນຄວາມເອົາໃຈໃສ່ຊີ້ນຳ ນຳພາຢ່າງໃກ້ຊິດຂອງກົມການເມືອງສູນກາງພັກ ແລະ ລັດຖະບານ, ຄວາມຮັບຜິດຊອບ ແລະ ເປັນເຈົ້າການຂອງບັນດາຂະແໜງການ ແລະ ທ້ອງຖິ່ນ ເຮັດໃຫ້ສາມາດຈຳກັດການແຜ່ລະບາດຂອງພະຍາດ COVID-19 ໃນປະເທດໄດ້ຢ່າງມີປະສິດທິພາບ. ໃນເວລາດຽວກັນ ລັດຖະບານໄດ້ມີຄວາມພະຍາຍາມແກ້ໄຂຜົນກະທົບຕໍ່ເສດຖະກິດ ໂດຍສືບຕໍ່ຄຸ້ມຄອງບໍລິຫານລັດຢ່າງຮັດກຸມ, ສືບຕໍ່ປັບປຸງກົນໄກຄຸ້ມຄອງເສດຖະກິດ, ກຳນົດ ແລະ ຈັດຕັ້ງປະຕິບັດນະໂຍບາຍຕ່າງໆ ເພື່ອຫຼຸດຜ່ອນຜົນກະທົບແກ່ຜູ້ໃຊ້ແຮງງານ, ທຸລະກິດ ແລະ ປະຊາຊົນ ເຮັດໃຫ້ເສດຖະກິດສາມາດສືບຕໍ່ຂະຫຍາຍຕົວ ແລະ ມີຄວາມໝັ້ນທ່ຽງຂຶ້ນ.

ໃນສະພາບທີ່ຍັງບໍ່ມີຄວາມແນ່ນອນດັ່ງກ່າວ, ຍັງມີຫຼາຍບັນຫາທີ່ຕ້ອງໄດ້ສືບຕໍ່ເອົາໃຈໃສ່ປັບປຸງ ແລະ ແກ້ໄຂ ເພື່ອປະຄັບປະຄອງເສດຖະກິດໃຫ້ຂະຫຍາຍຕົວຕໍ່ເນື່ອງ ແລະ ຍືນຍົງ. ສິ່ງດັ່ງກ່າວ ຮຽກຮ້ອງໃຫ້ມີການຕິດຕາມ ແລະ ປະເມີນສະພາບເສດຖະກິດມະຫາພາກເປັນແຕ່ລະໄລຍະ ໂດຍສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ໄດ້ມອບໝາຍໃຫ້ສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບໂຄງສ້າງເສດຖະກິດ ເປັນໃຈກາງປະສານງານຮ່ວມກັບຂະແໜງການອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ ເຮັດໜ້າທີ່ໃນການຕິດຕາມ ແລະ ປະເມີນສະພາບເສດຖະກິດດັ່ງກ່າວ ເພື່ອສະໜອງຂໍ້ມູນທີ່ຈຳເປັນໃຫ້ແກ່ ພັກ ແລະ ລັດຖະບານ ໃນການຮັບມືກັບສະພາບການ ແລະ ວາງແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ກໍຄື ສະໜອງຂໍ້ມູນຂ່າວສານເສດຖະກິດໃຫ້ແກ່ມວນຊົນ, ສະຖາບັນການສຶກສາ, ພາກທຸລະກິດ, ບັນດາກະຊວງ ແລະ ອົງການຈັດຕັ້ງຕ່າງໆທັງພາຍໃນ ແລະ ສາກົນ ເພື່ອເປັນບ່ອນອີງໃຫ້ແກ່ການຄົ້ນຄວ້າ, ການວາງແຜນທຸລະກິດ ແລະ ຮັບໃຊ້ວຽກງານຕ່າງໆຂອງກະຊວງ ແລະ ອົງການຕ່າງໆຕາມຄວາມເໝາະສົມ.

ຕາງໜ້າໃຫ້ຄະນະນຳຂອງສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (ສຄສຊ), ຂ້າພະເຈົ້າ ຂໍສະແດງຄວາມຂອບອົກຂອບໃຈຢ່າງຈິງໃຈ ມາຍັງຄະນະຮັບຜິດຊອບສ້າງບົດປະເມີນ ແລະ ບັນດາທ່ານຕົວແທນຈາກບັນດາກົມ, ຂະແໜງການອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ ທີ່ໃຫ້ການຮ່ວມມື ເປັນຕົ້ນແມ່ນການສະໜອງຂໍ້ມູນ ແລະ ປະກອບຄຳຄິດຄຳເຫັນຈາກບັນດາກົມຂອງກະຊວງແຜນການ ແລະ ການລົງທຶນ, ທະນາຄານແຫ່ງ ສປປ ລາວ, ກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ ແລະ ພາກສ່ວນຕ່າງໆອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ບົດປະເມີນສະພາບເສດຖະກິດມະຫາພາກຂອງ ສປປ ລາວ ໃນ 6 ເດືອນຕົ້ນປີ 2020 ສະບັບນີ້ ຈະເປັນຂໍ້ມູນທີ່ມີຄຸນປະໂຫຍດສຳລັບວຽກຕິດຕາມສະພາບເສດຖະກິດ, ວຽກງານຄົ້ນຄວ້າ, ວຽກງານວາງແຜນການພັດທະນາເສດຖະກິດ-ສັງຄົມຂອງຂະແໜງການທີ່ກ່ຽວຂ້ອງ ແລະ ສຳລັບບັນດາທ່ານທີ່ມີຄວາມສົນໃຈຢາກຊອກຮູ້ຮໍ່າຮຽນ. ກໍລະນີຫາກມີຂໍ້ຜິດພາດ ແລະ ຄວາມບໍ່ສອດຄ່ອງໃນບົດລາຍງານນີ້, ຂ້າພະເຈົ້າພ້ອມດ້ວຍທີມງານຍິນດີຮັບເອົາຄຳຄິດເຫັນ ແລະ ຄຳຕິຊົມຈາກບັນດາທ່ານດ້ວຍຄວາມຈິງໃຈ ເພື່ອເປັນການປັບປຸງສຳລັບຄັ້ງຕໍ່ໄປ.

ເຊັນແທນ ຫົວໜ້າ
ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ

ຫົວໜ້າ

ປອ. ສະຖາບັນດິດ ອິນສີຊຽງໃໝ່

# ສາລະບານ

ຄຳເຫັນຂອງຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ........ i
1. ສະພາບສາກົນ ແລະ ພາກພື້ນທີ່ພົ້ນເດັ່ນ ແລະ ຄວາມສ່ຽງຕໍ່ເສດຖະກິດຂອງ ສປປ ລາວ ........ 1
2. ສະພາບລວມຂອງເສດຖະກິດມະຫາພາກໃນ ສປປ ລາວ ........ 4
2.1 ນະໂຍບາຍ ແລະ ມາດຕະການຟື້ນຟູເສດຖະກິດ ໃນໄລຍະ COVID-19 ........ 4
2.2 ຄວາມຄືບໜ້າການຟື້ນຕົວຂອງເສດຖະກິດ ........ 5
2.3 ຄວາມບອບບາງ ແລະ ສິ່ງທ້າທາຍ ........ 7
3. ມາດຕະການທີ່ຄວນເອົາໃຈໃສ່ ........ 8
3.1 ສືບຕໍ່ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ ແລະ ຜູ້ໃຊ້ແຮງງານ ........ 8
3.2 ຟື້ນຟູການຜະລິດ-ທຸລະກິດ ........ 8
3.3 ເອົາໃຈໃສ່ບັນຫາສະຖຽນລະພາບເສດຖະກິດມະຫາພາກ ........ 9

# 1. ສະພາບສາກົນ ແລະ ພາກພື້ນທີ່ພົ້ນເດັ່ນ ແລະ ຄວາມສ່ຽງຕໍ່ເສດຖະກິດຂອງ ສປປ ລາວ

ການແຜ່ລະບາດຂອງພະຍາດ COVID-19 ໄດ້ສົ່ງຜົນກະທົບຮ້າຍແຮງຕໍ່ເສດຖະກິດໂລກກໍຄືພາກພື້ນ ຫຼາຍກວ່າທີ່ຄາດການໄວ້. ອີງຕາມການຄາດຄະເນຂອງກອງທຶນການເງິນລະຫວ່າງປະເທດ (IMF)[1], ເສດຖະກິດໂລກໃນປີ 2020 ຄາດວ່າຈະຖົດຖອຍເປັນ -4,9% ໂດຍປັບຫຼຸດລົງຕື່ມອີກ 1,9% ຈາກທີ່ຄາດຄະເນໄວ້ໃນເດືອນເມສາ 2020 ທີ່ -3%. ສ່ວນທະນາຄານພັດທະນາອາຊີ (ADB) ກໍໄດ້ປັບຫຼຸດອັດຕາການເຕີບໂຕເສດຖະກິດຂອງບັນດາປະເທດໃນພາກພື້ນອາຊີໃນປີ 2020 ລົງມາເປັນ 0,1% ໂດຍປັບລົງຈາກອັດຕາທີ່ຄາດຄະເນໃນເດືອນເມສາທີ່ 2,2%[2] ເຊິ່ງເປັນອັດຕາການເຕີບໂຕທີ່ຕໍ່າທີ່ສຸດນັບແຕ່ປີ 1961 ເປັນຕົ້ນມາ[3]. ນອກຈາກນີ້, IMF ຄາດວ່າພາຍໃນທ້າຍປີ 2020 ນີ້, ປະຊາຊົນທີ່ອາໄສຢູ່ຫຼາຍກວ່າ 170 ປະເທດ ຫຼື ເກືອບ 90% ຂອງທັງໝົດປະເທດທົ່ວໂລກ ຈະມີລາຍໄດ້ສະເລ່ຍຕໍ່ຫົວຄົນ ຕໍ່າກວ່າໄລຍະຕົ້ນປີ ຫຼື ກ່ອນເກີດການແຜ່ລະບາດຂອງພະຍາດ COVID-19 ແລະ ຈາກການຄາດຄະເນຂອງທະນາຄານໂລກ ໃຫ້ຮູ້ວ່າ ອັດຕາຄວາມທຸກຍາກໃນທົ່ວໂລກຈະເພີ່ມຂຶ້ນ ຈາກ 8,23% ໃນປີ 2019 ມາເປັນ 8,82% ໃນປີ 2020 ເຊິ່ງຈະເຮັດໃຫ້ປະຊາຊົນ 71 ລ້ານຄົນ ຕົກຢູ່ໃນສະພາບຄວາມທຸກຍາກທີ່ຮຸນແຮງ[4]. ມາຮອດປັດຈຸບັນ ສະພາບການແຜ່ລະບາດຂອງພະຍາດ COVID-19 ຍັງສືບຕໍ່ຮຸນແຮງ ແລະ ຫຼາຍປະເທດ ແມ່ນກໍາລັງປະເຊີນກັບການກັບມາລະບາດຮອບໃໝ່ ເຊັ່ນ: ສະຫະລັດອາເມລິກາ, ເບຣຊິນ, ອົດສຕຣາລີ, ອິນເດຍ ແລະ ປະເທດອື່ນໆ. ອີງຕາມຂໍ້ມູນລ່າສຸດຂອງອົງການອະນາໄມໂລກ (ຮອດວັນທີ 23 ກໍລະກົດ 2020) ມີຜູ້ຕິດເຊື້ອໃນທົ່ວໂລກທັງໝົດ 15.374.394 ຄົນ, ເສຍຊີວິດ 630.211 ຄົນ[5]. ສິ່ງທີ່ໜ້າເປັນຫ່ວງແມ່ນອັດຕາການເພີ່ມຂຶ້ນຂອງຈໍານວນຜູ້ຕິດເຊື້ອຕໍ່ມື້ (ຮູບທີ 1) ເຫັນວ່າ ມີທ່າອ່ຽງເພີ່ມຂຶ້ນສູງຢ່າງຕໍ່ເນື່ອງ ເຮັດໃຫ້ເສດຖະກິດໂລກ ຍັງສືບຕໍ່ປະເຊີນກັບຄວາມສ່ຽງ ແລະ ຄວາມບໍ່ແນ່ນອນສູງ. ຕົວຢ່າງ: ໃນເດືອນມີນາ ມີຜູ້ຕິດເຊື້ອໃໝ່ສະເລ່ຍຕໍ່າກວ່າ 50.000 ຄົນຕໍ່ມື້ ແຕ່ເພີ່ມຂຶ້ນເປັນ 101.714 ຄົນຕໍ່ມື້ ໃນວັນທີ 24 ເມສາ ແລະ ເພີ່ມຂຶ້ນເປັນ 279.769 ຄົນຕໍ່ມື້ ໃນວັນທີ 22 ກໍລະກົດ 2020. ນັກວິເຄາະຕ່າງໆທົ່ວໂລກໃຫ້ຄໍາຄິດເຫັນວ່າ ຄວາມຫວັງທີ່ເສດຖະກິດຈະຟື້ນຕົວໃນຮູບ V-shape ກໍາລັງຈະຈາງຫາຍໄປ ແລະ ຄາດວ່າຮອດປີ 2022 ເສດຖະກິດ ຈຶ່ງຈະກັບມາຟື້ນຕົວຮອດຈຸດເດີມກ່ອນມີການແຜ່ລະບາດຂອງພະຍາດດັ່ງກ່າວ. ການຟື້ນຕົວຂອງເສດຖະກິດ ອາດຈະເປັນໄປໃນຮູບຂອງ W-shape ຍ້ອນເຫັນວ່າ ຍັງມີຄວາມສ່ຽງ ແລະ ຄວາມບໍ່ແນ່ນອນສູງຢູ່ໄປຈົນຮອດທ້າຍປີ 2021.

---

[1] ແຫຼ່ງຂໍ້ມູນຈາກ ບົດລາຍງານທ່າອ່ຽງເສດຖະກິດໂລກ IMF ປະຈໍາເດືອນມິຖຸນາ 2020. ສໍາລັບຂໍ້ມູນ ເພີ່ມເຕີມສາມາດເບິ່ງໄດ້ທີ່ https://www.imf.org/en/Publications/WEO/Issues/2020/06/24/WEOUpdateJune2020.

[2] ແຫຼ່ງຂໍ້ມູນຈາກ ບົດລາຍງານທ່າອ່ຽງການພັດທະນາໃນອາຊີ ປີ 2020 ໂດຍ Asian Development Bank (ADB). ສໍາລັບຂໍ້ມູນເພີ່ມເຕີມສາມາດເບິ່ງໄດ້ທີ່ https://www.adb.org/publications/ado-supplement-june-2020.

[3] ກໍລະນີປະເທດໄທ, ທະນາຄານແຫ່ງປະເທດໄທ ຄາດຄະເນວ່າ ເສດຖະກິດຂອງໄທຈະຂະຫຍາຍຕົວຫຼຸດລົງ -8,1% ໃນປີ 2020 ຊຶ່ງເປັນອັດຕາການຂະຫຍາຍຕົວທີ່ຕໍ່າສຸດໃນປະຫວັດສາດຂອງໄທ ແລະ ໜັກໜ່ວງກວ່າ ໄລຍະທີ່ເກີດວິກິດການດ້ານການເງິນອາຊີ ໃນປີ 1998 ໂດຍອັດຕາການຂະຫຍາຍຕົວຂອງເສດຖະກິດໄທ ຫຼຸດລົງ -7,6%.

[4] ແຫຼ່ງຂໍ້ມູນຈາກ https://www.worldbank.org/en/topic/poverty/brief/projected-poverty-impacts-of-COVID-19.

[5] ແຫຼ່ງຂໍ້ມູນຈາກ https://www.worldometers.info/coronavirus/coronavirus-cases/#daily-cases.

ຮູບທີ1: ຈໍານວນຜູ້ຕິດເຊື້ອCOVID-19 ຕໍ່ມື້ໃນທົ່ວໂລກ




ແຫຼ່ງຂໍ້ມູນ: https://www.worldometers.info/coronavirus/coronavirus-cases/#daily-cases

ເຖິງແມ່ນວ່າ ສະພາບການແຜ່ລະບາດຂອງພະຍາດ COVID-19 ຍັງສືບຕໍ່ຮຸນແຮງ ແຕ່ຫຼາຍປະເທດໄດ້ເລີ່ມຜ່ອນຄາຍມາດຕະການປິດເມືອງ ແລະ ຈໍາກັດຫຼາຍກິດຈະກໍາ ເຮັດໃຫ້ເສດຖະກິດຂອງຫຼາຍປະເທດ ເລີ່ມກັບມາເຄື່ອນໄຫວເປັນປົກກະຕິ ຫຼື ມີສັນຍານການຟື້ນຕົວ. ສະພາບການດັ່ງກ່າວ ສົ່ງຜົນໃຫ້ຄວາມຕ້ອງການໃຊ້ນໍ້າມັນເພີ່ມຂຶ້ນ. ໃນຂະນະດຽວກັນ, ປະລິມານການສະໜອງນໍ້າມັນໃນຕະຫຼາດໂລກ ອາດບໍ່ຂະຫຍາຍຕົວເທົ່າທີ່ຄວນ ຍ້ອນກຸ່ມຜູ້ຜະລິດນໍ້າມັນ (OPEC) ແລະ ພັນທະມິດ ໄດ້ຂະຫຍາຍເວລາໃນການຫຼຸດປະລິມານການຜະລິດອອກໄປອີກໜຶ່ງເດືອນຮອດເດືອນກໍລະກົດ ຈາກເບື້ອງຕົ້ນທີ່ຈະສິ້ນສຸດໃນເດືອນມິຖຸນາ 2020[6] ເຊິ່ງເປັນອີກເງື່ອນໄຂໜຶ່ງ ທີ່ເຮັດໃຫ້ລາຄານໍ້າມັນໃນຕະຫຼາດໂລກເພີ່ມຂຶ້ນຢ່າງຕໍ່ເນື່ອງ[7] ແລະ ລາຄານໍ້າມັນຢູ່ ສປປ ລາວ ກໍປັບສູງຂຶ້ນຕາມທ່າອ່ຽງລາຄານໍ້າມັນໃນຕະຫຼາດໂລກເຊັ່ນກັນ. ນອກນັ້ນ, ສະພາບການດັ່ງກ່າວ ຍັງເຮັດໃຫ້ເງິນສະກຸນຕ່າງໆຂອງຫຼາຍປະເທດ ໂດຍສະເພາະປະເທດໃນຂົງເຂດພາກພື້ນອາຊີມີທ່າອ່ຽງແຂງຄ່າຂຶ້ນ[8] ທຽບກັບເງິນໂດລາສະຫະ

---

[6] ຫຼຸດກໍາລັງການຜະລິດ ລົງເຫຼືອ 9,7 ລ້ານບາເຣນ ຕໍ່ມື້ ຈາກປົກກະຕິທີ່ມີກໍາລັງການຜະລິດປະມານ 20 ລ້ານບາເຣນ ຕໍ່ມື້ ພາຍໃຕ້ຂໍ້ຕົກລົງເທື່ອທໍາອິດໃນເດືອນພຶດສະພາ ແລະ ຈະສິ້ນສຸດໃນທ້າຍເດືອນກໍລະກົດ 2020. ແຫຼ່ງຂໍ້ມູນ ໄດ້ຈາກ https://www.cnbc.com/2020/06/03/oil-prices-opec-likely-to-extend-deepest-ever-production-cuts-analysts-say.html.

[7] ລາຄານໍ້າມັນດິບ (Crude oil average) ເພີ່ມຂຶ້ນຈາກ 21,04 $/ບາເຣນ ໃນເດືອນເມສາມາເປັນ 30,38 $/ບາເຣນໃນເດືອນພຶດສະພາ ແລະ 39,5 $/ບາເຣນ ໃນເດືອນ ມິຖຸນາ 2020. ແຫຼ່ງຂໍ້ມູນ ໄດ້ຈາກ https://www.worldbank.org/en/research/commodity-markets.

[8] ການແຂງຄ່າຂອງເງິນສະກຸນຕ່າງໆໃນອາຊີ ນັບແຕ່ທ້າຍເດືອນພຶດສະພາ ຫາ ວັນທີ 11 ມິຖຸນາ 2020: ຣູເປຍອິນໂດເນເຊຍ 4,8%, ເງິນວອນເກົາຫຼີໃຕ້ 3,56%, ເງິນບາດໄທ 2,71%, ຣິງກິດມາເລເຊຍ 2,12%, ໂດລາສິງກະໂປ 1,61%, ໂດລາໄຕ້ຫວັນ 1,44%, ຢວນ 1,20%, ຟີລິບປິນເປໂຊ 0,90%, ຫວຽດນາມດົງ 0,28%, ເຢນຍີ່ປຸ່ນ 0,21%, ໂດລາຮົງກົງ 0,04%, ສ່ວນເງິນຣູປີອິນເດຍແມ່ນອ່ອນຄ່າ 0,45%. ແຫຼ່ງຂໍ້ມູນ ໄດ້ຈາກທະນາຄານແຫ່ງປະເທດໄທ ຫຼື https://www.bot.or.th/Thai/AboutBOT/Activities/Pages/PRNews11Jun2020.aspx.

ລັດ[9] ໂດຍສະເພາະເງິນບາດໄທແຂງຄ່າຂຶ້ນ 6% ນັບຕັ້ງແຕ່ມີການແຜ່ລະບາດຂອງພະຍາດ COVID-19 ເຊິ່ງອາດເປັນເງື່ອນໄຂໜຶ່ງເພີ່ມຄວາມກົດດັນຕໍ່ຄ່າເງິນກີບ ເຮັດໃຫ້ອ່ອນຄ່າທຽບໃສ່ເງິນບາດໄທ. ຖ້າເງິນກີບອ່ອນຄ່າ ຈະສົ່ງຜົນເຮັດໃຫ້ລາຄາສິນຄ້ານໍາເຂົ້າຈາກໄທ ແລະ ຈີນ ເພີ່ມສູງຂຶ້ນ ກະທົບຕໍ່ອັດຕາເງິນເຟີ້ຂອງລາວ ແລະ ການຊໍາລະໜີ້ສິນຕ່າງປະເທດທີ່ເປັນສະກຸນເງິນບາດໄທ ຫຼື ເງິນຢວນຈີນ.

ອີກດ້ານໜຶ່ງ, ການຟື້ນຕົວທາງດ້ານເສດຖະກິດຂອງຫຼາຍປະເທດ ຈະເຮັດໃຫ້ເກີດມີຄວາມຕ້ອງການສິນຄ້າປະເພດອຸດສາຫະກໍາ ແລະ ໂລຫະ ໃນຕະຫຼາດໂລກເພີ່ມສູງຂຶ້ນ ສົ່ງຜົນໃຫ້ລາຄາສິນຄ້າເຫຼົ່ານີ້ ເລີ່ມມີທ່າອ່ຽງເພີ່ມຂຶ້ນນັບແຕ່ເດືອນພຶດສະພາເປັນຕົ້ນມາ[10] ເຊັ່ນ: ລາຄາທອງແດງ. ສ່ວນລາຄາສິນຄ້າປະເພດກະສິກໍາໂດຍລວມເຫັນວ່າ ມີທ່າອ່ຽງເພີ່ມຂຶ້ນເຊັ່ນກັນ ໂດຍສະເພາະແມ່ນລາຄາເຂົ້າ, ຊາ, ກາເຟ, ຊີ້ນ ແລະ ອື່ນໆ[11] ຊຶ່ງເປັນຜົນດີຕໍ່ການສົ່ງອອກສິນຄ້າປະເພດກະສິກໍາຂອງລາວ. ເຖິງຢ່າງໃດກໍຕາມ, ການເພີ່ມຂຶ້ນຂອງລາຄາສິນຄ້າປະເພດກະສິກໍາ ເຊັ່ນ: ເຂົ້າ ນັ້ນອາດເຮັດໃຫ້ລາຄາເຂົ້າຢູ່ພາຍໃນປະເທດເຮົາເພີ່ມຂຶ້ນເຊັ່ນກັນ ເຊິ່ງກະທົບຕໍ່ຜູ້ບໍລິໂພກພາຍໃນໂດຍກົງ. ໂດຍສະເພາະ ໄລຍະລະດູຝົນໃນແຕ່ລະປີການສະໜອງເຂົ້າຢູ່ພາຍໃນຈະບໍ່ພຽງພໍຕໍ່ຄວາມຕ້ອງການຂອງຕະຫຼາດ ຍ້ອນເປັນລະດູການຜະລິດເຂົ້ານາປີ ຫຼື ປູກເຂົ້ານາປີ. ສະນັ້ນ, ປົກກະຕິແລ້ວ ລາຄາເຂົ້າຈະແພງໃນໄລຍະລະດູຝົນ ແລະ ຖ້າຫາກໄດ້ຮັບຜົນກະທົບຈາກໄພທໍາມະຊາດຕື່ມອີກ ແມ່ນຕ້ອງໄດ້ນໍາເຂົ້າຈາກປະເທດເພື່ອນບ້ານ.

ນອກຈາກນີ້, ເສດຖະກິດຂອງຫຼາຍປະເທດ ຍັງປະເຊີນກັບຄວາມສ່ຽງອື່ນໆອີກ ເຊັ່ນ: ໄພພິບັດທາງທໍາມະຊາດທີ່ນັບມື້ນັບຮຸນແຮງຂຶ້ນ ແລະ ຄາດເດົາໄດ້ຍາກ[12], ຂໍ້ຂັດແຍ່ງທາງການເມືອງທີ່ຮຸນແຮງຂຶ້ນເປັນຕົ້ນ ແມ່ນຂໍ້ຂັດແຍ່ງຢູ່ຂົງເຂດຕາເວັນອອກກາງ ເຊິ່ງເປັນປັດໄຈສ່ຽງຕໍ່ລາຄານໍ້າມັນໃນອະນາຄົດ, ຂໍ້ຂັດແຍ່ງລະຫວ່າງເກົາຫຼີເໜືອ ແລະ ເກົາຫຼີໃຕ້, ລະຫວ່າງ ສປ ຈີນ ແລະ ອິນເດຍ[13], ແລະ ເດັ່ນກວ່າໝູ່ແມ່ນຂໍ້ຂັດແຍ່ງ ລະຫວ່າງສະຫະລັດອາເມລິກາ ແລະ ສປ ຈີນ ທີ່ພວມທະວີຄວາມຮຸນແຮງຂຶ້ນ ແລະ ມີຄວາມສ່ຽງສູງ ທີ່ຈະເກີດສົງຄາມການຄ້າຮອບໃໝ່[14]

---

[9] ສໍາລັບເງິນໂດລາສະຫະລັດ ແມ່ນຢູ່ໃນທ່າອ່ຽງອ່ອນຄ່ານັບແຕ່ກາງເດືອນມີນາເປັນຕົ້ນມາ ຍ້ອນການແຜ່ລະບາດຂອງພະຍາດ COVID-19 ຢູ່ສະຫະລັດອາເມລິກາ ເພີ່ມສູງຂຶ້ນເລື້ອຍໆ ຊຶ່ງມີຜູ້ຕິດເຊື້ອເປັນອັນດັບໜຶ່ງຂອງໂລກ ແລະ ຍ້ອນມີສະພາບການເທຂາຍເງິນໂດລາໃນຕົ້ນເດືອນມິຖຸນາ ພາຍຫຼັງທີ່ທະນາຄານກາງສະຫະລັດ ໄດ້ປະກາດສືບຕໍ່ຮັກສາອັດຕາດອກເບ້ຍໃຫ້ຢູ່ໃນລະດັບ 0-0,25% ໄປຈົນຮອດປີ 2022 ແລະ ເພີ່ມການອັດສີດເງິນເຂົ້າສູ່ລະບົບເສດຖະກິດ ໂດຍຜ່ານຊ່ອງທາງການຊື້ຫຸ້ນກູ້ຂອງເອກະຊົນຈໍານວນ 750 ຕື້ໂດລາ. ແຫຼ່ງຂໍ້ມູນ ໄດ້ຈາກ https://www.federalreserve.gov/newsevents/pressreleases/monetary20200615a.htm
https://www.nytimes.com/aponline/2020/06/15/business/bc-federal-reserve-bonds.html
https://www.cnbc.com/video/2020/06/16/us-dollar-will-likely-weaken-against-g-10-currencies-societe-generale.html.

[10] ຕົວຢ່າງ: ທອງແດງເພີ່ມຂຶ້ນຈາກ 5.058 ໂດລາ/ໂຕນ ໃນເດືອນເມສາ ມາເປັນ 5.240 ໂດລາ/ໂຕນໃນເດືອນພຶດສະພາ ແລະ 5.755 ໂດລາ/ໂຕນ ໃນເດືອນມິຖຸນາ. ລາຄາຄໍາ ເພີ່ມຂຶ້ນຈາກ 1.683 ໂດລາ/ອອນມາເປັນໃນເດືອນເມສາ ມາເປັນ 1.716 ໂດລາ/ອອນ ໃນເດືອນພຶດສະພາ ແລະ 1.732 ໂດລາ/ອອນ ໃນເດືອນມິຖຸນາ. ແຫຼ່ງຂໍ້ມູນ ໄດ້ຈາກ
https://www.worldbank.org/en/research/commodity-markets.

[11] ອີງຕາມບົດລາຍງານລາຄາສິນຄ້າປະຈໍາເດືອນກໍລະກົດ 2020 ໂດຍທະນາໂລກ. ແຫຼ່ງຂໍ້ມູນ ໄດ້ຈາກ
http://pubdocs.worldbank.org/en/722721593705473133/CMO-Pink-Sheet-July-2020.pdf.

[12] ຕົວຢ່າງ: ເກີດມີນໍ້າຖ້ວມຮຸນແຮງຢູ່ ສປ ຈີນ ແລະ ຍີ່ປຸ່ນ.

[13] ເກີດມີການປະທະກັນຄັ້ງຮຸນແຮງທີ່ສຸດໃນຮອບ 40 ປີ ຢູ່ຊາຍແດນ ຈີນ-ອິນເດຍ ໃນເດືອນມິຖຸນາ 2020. ແຫຼ່ງຂໍ້ມູນ ໄດ້ຈາກ
https://edition.cnn.com/2020/06/16/asia/china-india-border-clash-intl-hnk/index.html.

[14] ອີງຕາມຂໍ້ມູນແຫຼ່ງຂ່າວຈາກ https://www.bloomberg.com/news/articles/2020-06-01/china-halts-some-u-s-farm-imports-threatening-trade-deal.

ລວມເຖິງຄວາມສ່ຽງທີ່ອາດນໍາໄປສູ່ການຕັດຂາດການພົວພັນດ້ານການຄ້າລະຫວ່າງສອງປະເທດດັ່ງກ່າວ[15]. ສະພາບການດັ່ງກ່າວ ອາດກະທົບການຄ້າ, ການລົງທຶນໃນຂົງເຂດພາກພື້ນອາຊີລວມທັງ ສປປ ລາວ, ແລະ ເຄືອຂ່າຍຕ່ອງໂສ້ການຜະລິດ ເພື່ອສົ່ງອອກໄປ ສປ ຈີນ ແລະ ສະຫະລັດອາເມລິກາ. ເຖິງຢ່າງໃດກໍຕາມ, ສະພາບການດັ່ງກ່າວ ອາດເປັນກາລະໂອກາດໃຫ້ແກ່ ສປປ ລາວ ຂະຫຍາຍຕະຫຼາດສົ່ງອອກໄປ ສປ ຈີນ ຫຼາຍຂຶ້ນໃນຕໍ່ໜ້າ ເພາະຈີນເປັນຕະຫຼາດທີ່ໃຫຍ່ ຖ້າ ສປປ ລາວ ຫາກສາມາດນໍາໃຊ້ທ່າແຮງທີ່ມີຢ່າງເຕັມທີ່ ແລະ ມີປະສິດທິພາບ. ນອກຈາກນີ້, ຂໍ້ຂັດແຍ່ງທາງການຄ້າລະຫວ່າງ ສປ ຈີນ ແລະ ສະຫະລັດອາເມລິກາ ອາດເຮັດໃຫ້ການລົງທຶນໂດຍກົງຈາກຕ່າງປະເທດ (FDI) ຫັນມາລົງທຶນໃນບັນດາປະເທດອື່ນໆຢູ່ຂົງເຂດພາກພື້ນອາຊີ ລວມເຖິງ ສປປ ລາວ ຫຼາຍຂຶ້ນ ເພື່ອກະຈາຍຄວາມສ່ຽງ ແລະ ຜົນກະທົບຈາກຂໍ້ຂັດແຍ່ງ. ລ່າສຸດ ໄດ້ມີການລາຍງານວ່າ 87 ບໍລິສັດຂອງຍີ່ປຸ່ນ[16] ກໍາລັງມີແຜນຍົກຍ້າຍຖານການຜະລິດອອກຈາກຈີນ. ໃນນັ້ນ, 30 ບໍລິສັດ ຈະຍົກຍ້າຍມາຕັ້ງໂຮງງານຜະລິດຢູ່ບັນດາປະເທດໃນຂົງເຂດອາຊຽນ ໂດຍສະເພາະ ຫວຽດນາມ ແລະ ອີກ 57 ບໍລິສັດ ຈະຍົກຍ້າຍໂຮງງານກັບຄືນໄປຍີ່ປຸ່ນ ໂດຍໄດ້ຮັບການຊ່ວຍເຫຼືອຈາກລັດຖະບານຍີ່ປຸ່ນ. ພ້ອມກັນນີ້, ການປະຕິບັດມາດຕະການປິດປະເທດຂອງຫຼາຍປະເທດ ລວມທັງ ສປປ ລາວ ເຮັດໃຫ້ມີຄວາມຫຍຸ້ງຍາກໃນການນໍາເຂົ້າສິນຄ້າອາດເປັນເງື່ອນໄຂໃນການເລັ່ງຊຸກຍູ້ ແລະ ສົ່ງເສີມການຜະລິດພາຍໃນ ໃຫ້ສາມາດກຸ້ມການຊົມໃຊ້ພາຍໃນປະເທດ ແລະ ຫຼຸດຜ່ອນການນໍາເຂົ້າ ແລະ ການສູນເສຍເງິນຕາຕ່າງປະເທດ.

# 2. ສະພາບລວມຂອງເສດຖະກິດມະຫາພາກໃນ ສປປ ລາວ

## 2.1 ນະໂຍບາຍ ແລະ ມາດຕະການຟື້ນຟູເສດຖະກິດ ໃນໄລຍະ COVID-19

ຄຽງຄູ່ກັບຄວາມພະຍາຍາມໃນການສະກັດກັ້ນ ແລະ ຈໍາກັດການແຜ່ລະບາດຂອງພະຍາດ COVID-19, ຜ່ານມາ ພັກ ແລະ ລັດຖະບານ ໄດ້ກໍານົດ 10 ນະໂຍບາຍ ແລະ 9 ມາດຕະການ ເພື່ອຫຼຸດຜ່ອນຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມໃນປີ 2020 ເຊິ່ງສາມາດສັງລວມບາງນະໂຍບາຍທີ່ພົ້ນເດັ່ນ ໄດ້ດັ່ງນີ້:

**ດ້ານນະໂຍບາຍການເງິນ**: ໄດ້ປະຕິບັດ 6 ນະໂຍບາຍ ເພື່ອຊ່ວຍພາກທຸລະກິດ ແລະ ຄົວເຮືອນ ໂດຍຮູບແບບການຜ່ອນຜັນການເສຍພາສີອາກອນ, ຜ່ອນຜັນການຊໍາລະຄ່າທໍານຽມທາງ, ຍົກເວັ້ນການເກັບອາກອນລາຍໄດ້ບຸກຄົນ ທີ່ມີລາຍຮັບຕໍ່າກວ່າ 5 ລ້ານກີບ ແລະ ຈຸນລະວິສາຫະກິດ, ຍົກເວັ້ນການເກັບພາສີນໍາເຂົ້າອຸປະກອນການແພດ ແລະ ປ້ອງກັນພະຍາດ COVID-19, ຍົກເວັ້ນການຈ່າຍອາກອນຂອງຂະແໜງທ່ອງທ່ຽວ, ຍົກເວັ້ນການປັບໄໝການຊໍາລະອາກອນຊັກຊ້າໃນໄລຍະເດືອນ ເມສາ ຫາ ເດືອນ ມິຖຸນາ, ແລະ ໄດ້ເລື່ອນເວລາໃນການແຈ້ງສະຫຼຸບບັນຊີຂອງວິສາຫະກິດ.

**ດ້ານນະໂຍບາຍເງິນຕາ:** ໄດ້ປັບຫຼຸດອັດຕາດອກເບ້ຍພື້ນຖານທະນາຄານກາງ ແລະ ອັດຕາເງິນແຮຝາກບັງຄັບ ເພື່ອຊ່ວຍທະນາຄານທຸລະກິດໃຫ້ມີສະພາບຄ່ອງທາງດ້ານການເງິນດີຂຶ້ນ, ໄດ້ຜ່ອນຜັນ ແລະ ເລື່ອນການຊໍາລະຕົ້ນທຶນ ແລະ ດອກເບ້ຍຂອງທະນາຄານທຸລະກິດໃຫ້ແກ່ລູກຄ້າຈໍານວນໜຶ່ງ. ໄດ້ຈັດສັນບ້ວງເງິນກູ້ 200 ຕື້ກີບ ໃຫ້ແກ່ 4 ທະນາຄານທຸລະກິດ ເພື່ອປ່ອຍກູ້ສົ່ງເສີມໃຫ້ແກ່ ຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (SME) ເຊິ່ງມາຮອດປັດຈຸບັນປະຕິບັດໄດ້ແລ້ວ ປະມານ 18 ຕື້ກີບ. ທະນາຄານແຫ່ງ ສປປ ລາວ ຍັງມີແຜນຈັດ

[15] ອີງຕາມຂໍ້ມູນແຫຼ່ງຂ່າວຈາກ https://www.posttoday.com/world/624400.

[16] ແຫຼ່ງຂໍ້ມູນຈາກໜັງສືພິມອອນລາຍ Nikkei Asian Review. ສໍາລັບຂໍ້ມູນເພີ່ມຕື່ມ ສາມາດເບິ່ງໄດ້ທີ່ https://asia.nikkei.com/Economy/Japan-reveals-87-projects-eligible-for-China-exit-subsidies.

ສັນເງິນກູ້ຈຳນວນໜຶ່ງປະມານ 1.800 ຕື້ກີບ ຫຼື ກວມ 1,09% ຂອງ GDP ປີ 2019 ເພື່ອຟື້ນຟູຫຼັງ COVID-19.

**ດ້ານການຄຸ້ມຄອງລາຄາ ແລະ ການຈໍລະຈອນສິນຄ້າ:** ໄດ້ມີການຄຸ້ມຄອງລາຄາສິນຄ້າ ໂດຍສະເພາະສິນຄ້າອຸປະໂພກທີ່ຜະລິດຢູ່ພາຍໃນປະເທດ ໃຫ້ຢູ່ໃນລະດັບປົກກະຕິ, ເຮັດໃຫ້ລາຄາບໍ່ມີການເໜັງຕີງຫຼາຍ. ສ່ວນບັນຫາການຈໍລະຈອນສິນຄ້າລະຫວ່າງແຂວງຕໍ່ແຂວງຢູ່ພາຍໃນປະເທດ ແລະ ກັບປະເທດເພື່ອນບ້ານ ກໍໄດ້ມີມາດຕະການແກ້ໄຂ ໃຫ້ຄວາມໂລ່ງລ່ຽນຂຶ້ນ.

**ດ້ານນະໂຍບາຍແຮງງານ ແລະ ສະຫວັດດີການສັງຄົມ:** ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ເກັບກຳຂໍ້ມູນຕົວເລກແຮງງານນອກລະບົບປະກັນສັງຄົມ ທີ່ໄດ້ຮັບຜົນກະທົບ ແລະ ໄດ້ເລີ່ມປະຕິບັດການຊົດເຊີຍອຸດໜູນການວ່າງງານແລ້ວ ປະມານ 3.738 ຄົນ ໃນ 140 ບໍລິສັດ ລວມເປັນມູນຄ່າ 4,85 ຕື້ກີບ[17] (ຮອດວັນທີ 22 ກໍລະກົດ 2020). ນອກນັ້ນ, ຍັງໄດ້ປະຕິບັດການຫຼຸດຄ່າຊົມໃຊ້ ນ້ຳປະປາ, ອິນເຕີເນັດ ແລະ ບໍລິການຂໍ້ເຫຍື່ອ. ສ່ວນລາຄາໄຟຟ້າກໍໄດ້ມີນະໂຍບາຍເພີ່ມຕື່ມ ໃຫ້ແກ່ກຸ່ມຄົວເຮືອນທີ່ໃຊ້ໄຟຟ້າແຕ່ 151-461 ກິໂລວັດໂມງ.

## 2.2 ຄວາມຄືບໜ້າການຟື້ນຕົວຂອງເສດຖະກິດ

ເຖິງແມ່ນວ່າສະຖານະການແຜ່ລະບາດພະຍາດ COVID-19 ໃນຂົງເຂດອາຊີ ມີທ່າອ່ຽງດີຂຶ້ນ ແຕ່ສະຖານະການໃນທົ່ວໂລກຍັງສືບຕໍ່ຮ້າຍແຮງ ແລະ ສົ່ງຜົນກະທົບຕໍ່ເສດຖະກິດໃນວົງກວ້າງ. ເດືອນມິຖຸນາ, IMF ໄດ້ປະເມີນຄືນຕົວເລກຄາດຄະເນເສດຖະກິດໂລກ ປີ 2020 ຫຼຸດລົງເປັນ -4,9% ລວມທັງ ປະເທດໄທ ຕິດລົບ -7,7% ແລະ ສປ ຈີນ 1%. ສຳລັບ ສປປ ລາວ, IMF ຄາດໄວ້ໃນເດືອນເມສາ ທີ່ລະດັບ 0,7% ແຕ່ກໍ່ມີຄວາມເປັນໄປໄດ້ສູງທີ່ຈະມີການປະເມີນຄືນໃໝ່ຫຼຸດລົງອີກ.

ໃນວັນທີ 24 ກໍລະກົດ 2020, ໄດ້ມີການລາຍງານວ່າ ມີຜູ້ຕິດເຊື້ອລາຍໃໝ່ 1 ຄົນ ໃນຮອບ 102 ວັນ ເຊິ່ງເປັນຄົນສັນຊາດເກົາຫຼີ ເປັນເພດຊາຍ ແລະ ມີອາຍຸ 32 ປີ ໄດ້ເດີນທາງມາຈາກຕ່າງປະເທດ ເຂົ້າມາລາວໃນວັນທີ 18 ກໍລະກົດ 2020. ປັດຈຸບັນ, ລວມຜູ້ທີ່ຕິດເຊື້ອ COVID-19 ຢູ່ ສປປ ລາວ ມີທັງໝົດ 20 ຄົນ. ເຖິງຢ່າງໃດກໍຕາມ, ຜູ້ຕິດເຊື້ອລາຍໃໝ່ນີ້ ເປັນກໍລະນີນຳເຂົ້າ ແລະ ລັດຖະບານ ກໍໄດ້ປະຕິບັດມາດຕະການຈຳກັດບໍລິເວນຢ່າງເຂັ້ມງວດ. ສະນັ້ນ, ສະພາບການດັ່ງກ່າວ ມີຄວາມເປັນໄປໄດ້ຕ່ຳຫຼາຍທີ່ຈະກະທົບຕໍ່ການແຜ່ລະບາດຂອງພະຍາດຢູ່ພາຍໃນປະເທດ. ໃນໄລຍະຜ່ານມາ, ລັດຖະບານກໍໄດ້ຜ່ອນຄາຍຫຼາຍມາດຕະການ ເພື່ອເຮັດໃຫ້ເສດຖະກິດກັບຄືນສູ່ສະພາບປົກກະຕິ. ມາຮອດປັດຈຸບັນ ເຫັນວ່າມີຫຼາຍສັນຍານທີ່ບົ່ງບອກວ່າ ເສດຖະກິດ ສປປ ລາວ ໂດຍລວມຄ່ອຍໆດີຂຶ້ນ ເປັນຕົ້ນແມ່ນ:

- ຕົວເລກປະກາດຮັບສະໝັກງານເລີ່ມເພີ່ມຂຶ້ນຈາກທີ່ມີອັດຕາຕ່ຳສຸດໃນເດືອນເມສາ ເຖິງແມ່ນວ່າຈະຍັງບໍ່ທັນສູງເທົ່າໄລຍະດຽວກັນຂອງປີຜ່ານມາກໍຕາມ[18].
- ພາກການສົ່ງອອກ ເຫັນວ່າເລີ່ມດີຂຶ້ນໃນເດືອນພຶດສະພາ ແລະ ມິຖຸນາ ເມື່ອທຽບໃສ່ໄລຍະແຕ່ເດືອນມັງກອນ ຫາ ເດືອນເມສາ ເຖິງແມ່ນວ່າຈະຍັງບໍ່ທັນກັບຄືນເຂົ້າສູ່ລະດັບປົກກະຕິກໍຕາມ. ສາເຫດສ່ວນໜຶ່ງແມ່ນຍ້ອນການເຄື່ອນຍ້າຍສິນຄ້າຂ້າມແດນມີຄວາມໂລ່ງລ່ຽນຂຶ້ນ.

---

[17] ແຫຼ່ງຂໍ້ມູນ ຈາກອົງການປະກັນສັງຄົມແຫ່ງຊາດ.

[18] ອີງຕາມທ່າອ່ຽງການປະກາດວຽກຢູ່ 108.JOBS ແຕ່ເດືອນ ມັງກອນ- ເດືອນ ມິຖຸນາ ປີ 2020 ເມື່ອທຽບກັບຖານເດືອນ ມັງກອນ.

- ບັນຍາກາດການທ່ອງທ່ຽວພາຍໃນເລີ່ມດີຂຶ້ນ ເຖິງຈະບໍ່ສາມາດທົດແທນການທ່ອງທ່ຽວຂອງຕ່າງປະເທດ ແຕ່ກໍພໍຊ່ວຍໃຫ້ຂະແໜງການມີລາຍຮັບຈຳນວນໜຶ່ງ.

- ມູນຄ່າການອະນຸມັດການລົງທຶນໃນປະເພດທຸລະກິດທົ່ວໄປ ໃນໄລຍະ 6 ເດືອນ[19] ເຫັນວ່າ ຍັງເພີ່ມຂຶ້ນ 7,1% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ.

- ການຜະລິດໄຟຟ້າ ໃນໄລຍະ 5 ເດືອນຜ່ານມາ ຂະຫຍາຍຕົວ 5,2% ເມື່ອທຽບກັບໄລຍະດຽວກັນຂອງປີຜ່ານມາ.

- ຂະແໜງການບໍລິການອື່ນໆເຊັ່ນ: ໂທລະຄົມມະນາຄົມ (ບໍລິການອິນເຕີເນັດ), ການເງິນ-ການທະນາຄານ, ສາທາລະນະສຸກ, ນ້ຳປະປາ-ໄຟຟ້າ ແລະ ການບໍລິການພາກລັດ ຍັງປະກອບສ່ວນໄດ້ດີຕໍ່ການເຕີບໂຕຂອງເສດຖະກິດເພາະເປັນຂະແໜງການທີ່ຍັງດຳເນີນປົກກະຕິ ແລະ ມີການໃຊ້ຈ່າຍງົບປະມານເຂົ້າໃນການປ້ອງກັນການແຜ່ລະບາດຂອງພະຍາດ.

- ການປ່ອຍສິນເຊື່ອຂອງທະນາຄານທຸລະກິດໃຫ້ແກ່ຂະແໜງເສດຖະກິດໃນໄລຍະ 5 ເດືອນຜ່ານມາ ຍັງຂະຫຍາຍຕົວ 7,5% ເມື່ອທຽບກັບໄລຍະດຽວກັນຂອງປີຜ່ານມາ.

- ນອກນັ້ນ, ຍັງສືບຕໍ່ໄດ້ຮັບການຊ່ວຍເຫຼືອຈາກສາກົນ ແລະ ປະເທດເພື່ອນບ້ານ ເປັນມູນຄ່າປະມານ 110,6 ລ້ານໂດລາ ຫຼື ກວມ 0,61% ຂອງ GDP ໃນປີ 2019.

- ຂະແໜງກະສິກຳ ຍັງສືບຕໍ່ຂະຫຍາຍຕົວ ເຖິງແມ່ນວ່າຈະຢູ່ໃນທ່າອ່ຽງຊ້າລົງທຽບກັບແຜນທີ່ວາງໄວ້ກໍຕາມ, ຄາດວ່າຍັງຈະຂະຫຍາຍຕົວປະມານ 0,9-1,7% ໝົດປີ 2020 ແຕ່ກໍຍັງຕ່ຳກວ່າລະດັບປົກກະຕິ (ປະມານ 2,8-3%).

ເຖິງຢ່າງໃດກໍຕາມ, ການເຕີບໂຕຂອງເສດຖະກິດໝົດປີ ຄາດວ່າຍັງມີຄວາມບອບບາງຫຼາຍ ແລະ ມີຄວາມສ່ຽງສູງທີ່ອາດຈະຫຼຸດລົງຈາກລະດັບທີ່ຄາດການໄວ້ເບື້ອງຕົ້ນ[20] ຍ້ອນ:

- ສະພາບການແຜ່ລະບາດຢູ່ນອກປະເທດ ໂດຍສະເພາະປະເທດຕາເວັນຕົກ ຍັງສືບຕໍ່ເພີ່ມຂຶ້ນບໍ່ຢຸດ ແລະ ອາດສືບຕໍ່ຮຸນແຮງຂຶ້ນໃນສອງໄຕມາດສຸດທ້າຍຂອງປີ 2020 ຊຶ່ງເປັນສິ່ງທ້າທາຍຕໍ່ຄວາມຫວັງໃນການປົດລັອກການພົວພັນລະຫວ່າງປະເທດ ທີ່ເປັນໜຶ່ງໃນທາງອອກສຳຄັນຂອງການຟື້ນຟູເສດຖະກິດ. ຕົວຊີ້ບອກທີ່ໜ້າເປັນຫ່ວງແມ່ນ ອັດຕາການຕິດເຊື້ອທົ່ວໂລກ ເພີ່ມຂຶ້ນຈາກລະດັບສະເລ່ຍ ຕ່ຳກວ່າ 50 ພັນຄົນຕໍ່ມື້ ໄລຍະເດືອນມີນາ-ເມສາ ມາເປັນປະມານ 1 ແສນຄົນຕໍ່ມື້ ໄລຍະ ເດືອນ ເມສາ-ມິຖຸນາ, ແລະ ມາເປັນປະມານ 2 ແສນຄົນຕໍ່ມື້ ໃນເດືອນກໍລະກົດ ເປັນຕົ້ນມາ.

- ຂະແໜງທ່ອງທ່ຽວ ຄາດວ່າ ຈະສືບຕໍ່ໄດ້ຮັບຜົນກະທົບໃນ 6 ເດືອນທ້າຍປີ. ຈາກຕົວເລກລ່າສຸດ, ນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາລາວໃນໄຕມາດທີ 2 ເກືອບວ່າບໍ່ມີເລີຍ ເຮັດໃຫ້ຕົວເລກນັກທ່ອງທ່ຽວ ທີ່ເຂົ້າມາລາວສະສົມໃນ 6 ເດືອນຕົ້ນປີ ມີພຽງ 886.447 ເທື່ອຄົນ ໂດຍຫຼຸດລົງ -60% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ.

- ການຜະລິດຂອງຂະແໜງທີ່ສຳຄັນເຊັ່ນ: ອຸດສາຫະກຳປຸງແຕ່ງ ແລະ ເຄື່ອງກໍ່ສ້າງ ໃນໄລຍະ 5 ເດືອນຕົ້ນປີ ເລີ່ມມີທ່າອ່ຽງຫຼຸດລົງ. ຕົວຢ່າງ: ການຜະລິດຊີມັງ ຫຼຸດລົງ -25%, ການຜະລິດເຄື່ອງດື່ມເບຍ ຫຼຸດລົງ

[19] ອີງຕາມຖານຂໍ້ມູນວິສາຫະກິດແຫ່ງຊາດ, ກົມທະບຽນ ແລະ ຄຸ້ມຄອງ ວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ

[20] ມີຄວາມເປັນໄປໄດ້ວ່າ ການເຕີບໂຕເສດຖະກິດລາວໝົດປີ ອາດຫຼຸດລົງຢູ່ໃນລະດັບຕ່ຳກວ່າ 1% ຍ້ອນເຫັນວ່າ ຜົນກະທົບຂອງ COVID-19 ໄດ້ແກ່ຍາວຫຼາຍຂຶ້ນ ຈາກທີ່ໄດ້ປະເມີນໄວ້ເບື້ອງຕົ້ນໃນເດືອນເມສາ.

-10,9% ແລະ ການຜະລິດເຄື່ອງດື່ມນ້ຳຫວານ ຫຼຸດລົງ -2,3% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສ່ວນການຜະລິດຄຳ ແລະ ທອງແດງ ແມ່ນໄດ້ເລີ່ມຫຼຸດລົງຕັ້ງແຕ່ຕົ້ນປີເປັນຕົ້ນມາຄື: -41% ແລະ -2% ໃນໄຕມາດທີ 1.

- ມູນຄ່າສົ່ງອອກ 6 ເດືອນ[21] ຍັງຢູ່ໃນລະດັບຕ່ຳ ມີປະມານ 2.600 ລ້ານໂດລາ ຫຼຸດລົງ -5,1% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ (2.800 ລ້ານໂດລາ). ສິນຄ້າປະເພດເຄື່ອງນຸ່ງຫົ່ມ, ມັນຕົ້ນ, ກ້ວຍ, ກາເຟ, ເຍື່ອໄມ້, ເຈ້ຍ ແລະ ຊິ້ນສ່ວນເຄື່ອງເອເລັກໂທນິກ ຄາດວ່າໄດ້ຮັບຜົນກະທົບຫຼາຍສຸດ ຍ້ອນເສດຖະກິດຂອງຕະຫຼາດສົ່ງອອກເຊັ່ນ: ໄທ, ຈີນ, ຫວຽດນາມ ຂະຫຍາຍຕົວຊ້າ ຫຼື ຫຼຸດລົງ.
- ການລົງທຶນ ຄາດວ່າຈະຫຼຸດລົງເຊັ່ນກັນ. ອີງຕາມຂໍ້ມູນຈາກກະຊວງແຜນການ ແລະ ການລົງທຶນ, ມູນຄ່າອະນຸມັດລົງທຶນໃນປະເພດສຳປະທານໃນໄລຍະ 5 ເດືອນຕົ້ນປີ ມີພຽງ 151 ລ້ານໂດລາ ເຊິ່ງ ຕ່ຳກວ່າມູນຄ່າອະນຸມັດລົງທຶນ ໃນໄລຍະດຽວກັນຂອງປີຜ່ານມາ (2.383,8 ລ້ານໂດລາ).

## 2.3 ສິ່ງທ້າທາຍໃນຕໍ່ໜ້າ

- ບັນຫາການວ່າງງານ ອາດຈະຍັງເໜັງຕີງ ແລະ ສືບຕໍ່ເພີ່ມສູງຂຶ້ນ. ອັດຕາການວ່າງງານໃນປີ 2020 ຄາດວ່າຈະຢູ່ໃນລະດັບ 20%[22] ໃນປີ 2020 ເພີ່ມຈາກ 9,4% ໃນປີ 2017. ອັດຕາການວ່າງງານນີ້ ໄດ້ລວມເອົາແຮງງານລາວທີ່ກັບມາຈາກຕ່າງປະເທດ ໂດຍສະເພາະຈາກປະເທດໄທ ເຊິ່ງປັດຈຸບັນຄາດວ່າ ມີປະມານ 127.000 ຄົນ. ສະພາບດັ່ງກ່າວ, ຄາດວ່າ ສປປ ລາວ ຈະສູນເສຍລາຍຮັບຈາກເງິນໂອນທີ່ເຄີຍໄດ້ຮັບໃນປີຜ່ານໆມາ ຈາກແຮງງານລາວທີ່ເຮັດວຽກຢູ່ໄທ ປະມານ 42 ລ້ານໂດລາ ຫຼື ກວມ 0,22% ຂອງມູນຄ່າ GDP ໃນປີ 2019.
- ຄັງສຳຮອງເງິນຕາຕ່າງປະເທດ ທີ່ຕ່ຳຢູ່ແລ້ວ ອາດຖືກກະທົບໄດ້ອີກ ຍ້ອນກະແສໄຫຼເຂົ້າຂອງເງິນຕາຕ່າງປະເທດມີທ່າອ່ຽງຫຼຸດລົງ ເນື່ອງຈາກການສົ່ງອອກ ແລະ ການລົງທຶນຕ່າງປະເທດຫຼຸດລົງ ບວກກັບກະແສເງິນໄຫຼອອກເພີ່ມຂຶ້ນ ຈາກການນຳເຂົ້າ ແລະ ການຊຳລະໜີ້ສິນຕ່າງປະເທດ. ສະພາບດັ່ງກ່າວ ລ້ວນແຕ່ສ້າງຄວາມກົດດັນຕໍ່ຄ່າເງິນກີບ.
- ອັດຕາແລກປ່ຽນ ອາດຜັນຜວນ ໄປໃນທິດທາງອ່ອນຄ່າຫຼາຍຂຶ້ນ ຍ້ອນຄວາມຕ້ອງການນຳໃຊ້ເງິນຕາເພື່ອນຳເຂົ້າ ແລະ ຊຳລະໜີ້ສິນ ຍັງມີຕໍ່ເນື່ອງ ໃນຂະນະທີ່ລາຍຮັບທີ່ເປັນເງິນຕາຈາກການສົ່ງອອກຍັງຟື້ນຕົວຊ້າ. ຕົວຊີ້ວັດໜຶ່ງຂອງຄວາມຕ້ອງການເງິນຕາແມ່ນຄວາມແຕກຕ່າງກັນຫຼາຍລະຫວ່າງອັດຕາແລກປ່ຽນຂອງຕະຫຼາດ ແລະ ທະນາຄານ ຊຶ່ງຖ້າເບິ່ງລວມໃນໄລຍະ 6 ເດືອນ ສະເລ່ຍແມ່ນແຕກຕ່າງກັນບໍ່ສູງ, ແຕ່ສະເພາະເດືອນກໍລະກົດ[23] ໄດ້ມີອັດຕາຄວາມແຕກຕ່າງລະຫວ່າງເງິນກີບຕໍ່ໂດລາ ເພີ່ມຂຶ້ນສູງເກືອບ 8% ສ່ວນເງິນກີບຕໍ່ບາດ ບໍ່ຕ່າງກັນຫຼາຍປະມານ 1%.
- ດ້ານສະພາບລາຄາ, ໂດຍລວມອັດຕາເງິນເຟີ້ ຍັງຢູ່ໃນລະດັບສູງກວ່າ 5% ແຕ່ກໍ່ມີທ່າອ່ຽງຫຼຸດລົງ ນັບແຕ່ເດືອນກຸມພາ 2020 ເປັນຕົ້ນມາ. ເຖິງຢ່າງໃດກໍຕາມ, ອັດຕາເງິນເຟີ້ໝວດສິນຄ້າປະເພດສະບຽງອາຫານ,

---

[21] ຂໍ້ມູນການສົ່ງອອກ (ບໍ່ລວມສົ່ງອອກໄຟຟ້າ) ແມ່ນຈາກ ກະຊວງອຸດສາຫະກຳ ແລະ ການຄ້າ. ຂໍ້ມູນປະລິມານການສົ່ງອອກໄຟຟ້າ (kWh) ໃນໄລຍະ 5 ເດືອນ ແມ່ນຈາກກະຊວງພະລັງງານ ແລະ ບໍ່ແຮ່. ສ່ວນການສົ່ງອອກໄຟຟ້າໃນເດືອນ ມິຖຸນາ ແມ່ນຄາດຄະເນອີງໃສ່ຄ່າສະເລ່ຍ 5 ເດືອນຜ່ານມາ. ລາຄາຂາຍໄຟຟ້າຕໍ່ຫົວໜ່ວຍ ສຳລັບສົ່ງອອກ ແມ່ນອີງຕາມລາຄາປີຜ່ານມາ.

[22] ອີງຕາມຮ່າງໜັງສືສະເໜີ ເຖິງກຳມາທິການວັດທະນາທຳ-ສັງຄົມ, ສະພາແຫ່ງຊາດ ເພື່ອຊີ້ແຈງການປ່ຽນແປງກຳລັງແຮງງານປີ 2020 ແລະ ຂໍພິຈາລະນາດັດແກ້ຕົວເລກຄາດໝາຍສູ້ຊົນໝົດປີ 2020 ຂະແໜງ ຮສສ ຕາມມະຕິສະພາແຫ່ງຊາດ ເລກທີ 20/ສພຊ

[23] ຜ່ານການຕິດຕາມຂອງ ສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບໂຄງສ້າງເສດຖະກິດ ກ່ຽວກັບສະພາບອັດຕາແລກປ່ຽນຢູ່ຮ້ານແລກປ່ຽນ ນັບແຕ່ຕົ້ນເດືອນມິຖຸນາ-ກາງເດືອນມິຖຸນາ 2020

ປິ່ນປົວສຸຂະພາບ, ເຄື່ອງໃຊ້ໃນເຮືອນ ແລະ ເຄື່ອງນຸ່ງຫົ່ມ ເຫັນວ່າ ຍັງຢູ່ໃນລະດັບສູງ ແລະ ຈະມີທ່າອ່ຽງແພງຂຶ້ນ ເປັນຕົ້ນແມ່ນລາຄາພືດ-ຜັກ.

- ຕະຫຼາດການເງິນ-ເງິນຕາ ຍັງມີຄວາມອ່ອນໄຫວສູງ. ອີງຕາມບົດລາຍງານທ່າອ່ຽງເສດຖະກິດໂລກຂອງ IMF ໃນເດືອນມິຖຸນາ ໃຫ້ຮູ້ວ່າ ຜົນກະທົບຈາກ COVID-19 ຈະເຮັດໃຫ້ໜີ້ສາທາລະນະ (Public Debt) ໃນບັນດາປະເທດກຳລັງພັດທະນາ ເພີ່ມຂຶ້ນປະມານ 0,8-1,1% ຕໍ່ GDP. ດັ່ງນັ້ນ, ເປັນໄປໄດ້ວ່າ ໜີ້ສາທາລະນະຂອງລາວ ອາດຈະເພີ່ມຂຶ້ນສູງຢູ່ໃນລະດັບ 65-68% ຕໍ່ GDP ໃນປີ 2020[24] ຍ້ອນການເກັບລາຍຮັບຫຼຸດລົງຫຼາຍ ແລະ ກູ້ຢືມຫຼາຍຂຶ້ນ ເພື່ອດຸ່ນດ່ຽງງົບປະມານ ແລະ ຊຳລະລາຍຈ່າຍ. ອັດຕາສ່ວນໜີ້ເສຍ (NPL) ໃນພາກທະນາຄານທຸລະກິດ ກໍຄາດວ່າ ຈະເພີ່ມຂຶ້ນເຊັ່ນກັນ ຍ້ອນວ່າຫຼາຍທຸລະກິດຂອງເອກະຊົນ ແລະ ຄົວເຮືອນ ອາດຂາດສະພາບຄ່ອງ ເຮັດໃຫ້ບໍ່ສາມາດຈ່າຍດອກເບ້ຍ ແລະ ຕົ້ນທຶນກູ້ຢືມຈາກທະນາຄານໄດ້ທັນຕາມກຳນົດເວລາ.

## 3. ມາດຕະການທີ່ຄວນເອົາໃຈໃສ່

ໃນສະພາບທີ່ຄວາມບໍ່ແນ່ນອນຍັງມີສູງ, ການວາງນະໂຍບາຍຄວນເນັ້ນໃສ່ການປັບຕົວເຂົ້າກັບສະພາບປົກກະຕິໃໝ່ໃຫ້ຫຼາຍຂຶ້ນ ເປັນຕົ້ນແມ່ນສຸມໃສ່ບາງຂໍ້ສະເໜີດ້ານມາດຕະການດັ່ງນີ້:

### 3.1 ສືບຕໍ່ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ ແລະ ຜູ້ໃຊ້ແຮງງານ

- ຂະແໜງການຄ້າສືບຕໍ່ຕິດຕາມ ແລະ ຄວບຄຸມລາຄາສິນຄ້າອຸປະໂພກບໍລິໂພກທີ່ສຳຄັນ ແລະ ຈຳເປັນຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ຫຼີກລ້ຽງການສວຍໂອກາດກັກຕຸນ ແລະ ຂຶ້ນລາຄາສິນຄ້າຕາມລຳພັງໃຈຂອງແມ່ຄ້າບາງຈຳນວນ.
- ເອົາໃຈໃສ່ປະຕິບັດຂໍ້ຕົກລົງວ່າດ້ວຍການປະຕິບັດນະໂຍບາຍປະກັນສັງຄົມເພື່ອແກ້ໄຂຜົນກະທົບຂອງການແຜ່ລະບາດຂອງເຊື້ອພະຍາດ COVID-19 ສະບັບເລກທີ 1682/ຮສສ, ລົງວັນທີ 10 ມິຖຸນາ 2020.
- ຄົ້ນຄວ້ານະໂຍບາຍຊ່ວຍແຮງງານທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດເຊື້ອພະຍາດ COVID-19 ລວມທັງແຮງງານລາວທີ່ກັບຈາກຕ່າງປະເທດ ໄປຄຽງຄູ່ກັບການສ້າງສິ່ງຈູງໃຈ ແລະ ນຳໃຊ້ແຮງງານລາວທີ່ກັບຈາກຕ່າງປະເທດ ຊຶ່ງເຂົາເຈົ້າເຫຼົ່ານີ້ຖືວ່າມີລະດັບສີມືແຮງງານດີສົມຄວນ ໃຫ້ເປັນແຮງງານທີ່ສາມາດສະໜອງໃຫ້ແກ່ພາກອຸດສາຫະກຳພາຍໃນປະເທດ ທີ່ຍັງມີຄວາມຕ້ອງການແຮງງານຢູ່.

### 3.2 ຟື້ນຟູການຜະລິດ-ທຸລະກິດ

- ສົ່ງເສີມ 13 ມາດຕະການທີ່ກະຊວງກະສິກຳ-ປ່າໄມ້ ວາງອອກ ເພື່ອຊຸກຍູ້ການຜະລິດສະບຽງອາຫານ ແລະ ສິນຄ້າ ໃຫ້ສາມາດຕອບສະໜອງຄວາມຕ້ອງການພາຍໃນໄດ້ ເພື່ອທົດແທນການນຳເຂົ້າ. ຍາດແຍ່ງຕະຫຼາດຈີນ ໂດຍເພີ່ມທະວີການຊຸກຍູ້ສົ່ງເສີມການຜະລິດສິນຄ້າກະສິກຳ ແລະ ອຸດສາຫະກຳ ທີ່ລາວເຮົາມີທ່າແຮງ ແລະ ເປັນທີ່ຕ້ອງການຂອງຕະຫຼາດຈີນ ທັງເປັນການຍາດແຍ່ງກາລະໂອກາດຂອງຂໍ້ຂັດແຍ່ງດ້ານການຄ້າຮອບໃໝ່ ລະຫວ່າງສະຫະລັດອາເມລິກາ ແລະ ສປ ຈີນ ທີ່ມີຄວາມເປັນໄປໄດ້ສູງທີ່ ສປ ຈີນ ຈະຫັນມາພົວພັນການຄ້າກັບບັນດາປະເທດໃນພາກພື້ນອາຊີ. ສວຍໃຊ້ໂອກາດທີ່ຍັງມີການປິດປະເທດ ຕ້ອງໄດ້ເລັ່ງສົ່ງເສີມ ແລະ ປັບປຸງການຜະລິດສິນຄ້າອຸປະໂພກ-ບໍລິໂພກທີ່ມີການຜະລິດພາຍໃນຢູ່ແລ້ວ ເຊັ່ນ:

---

[24] ຂໍ້ມູນຈາກບົດລາຍງານຂອງທະນາຄານໂລກໃນເດືອນ ມິຖຸນາ ປີ 2020

ສະບຽງອາຫານ, ເຄື່ອງປຸງແຕ່ງອາຫານ, ສະບູ່ຝຸ່ນ, ຢາສະຜົມ, ເຈ້ຍອະນາໄມ ແລະ ອື່ນໆ ໃຫ້ພຽງພໍ ແລະ ມີຄຸນນະພາບທຽບເທົ່າກັບສິນຄ້າທີ່ນຳເຂົ້າຈາກຕ່າງປະເທດ ເພື່ອໃຫ້ສິນຄ້າທີ່ຜະລິດພາຍໃນນັ້ນ ສາມາດຕິດຕະຫຼາດ ຫຼື ເປັນທີ່ນິຍົມຂອງຄົນລາວ ເພື່ອກ້າວໄປເຖິງການຍຸດຕິ ຫຼື ເພື່ອຫຼຸດຜ່ອນການເອື່ອຍອີງການນຳເຂົ້າຈາກຕ່າງປະເທດ. ທີ່ສຳຄັນ, ຕ້ອງປຸກລະດົມສ້າງຄ່ານິຍົມສິນຄ້າ ແລະ ຜະລິດຕະພັນລາວຜ່ານການອອກນະໂຍບາຍ ຫຼື ມາດຕະການບັງຄັບໃຊ້ຜະລິດຕະພັນລາວໃນບັນດາສຳນັກງານອົງການຂອງລັດ, ແລະ ໃຫ້ນະໂຍບາຍ ຫຼື ສິ່ງຈູງໃຈແກ່ພາກເອກະຊົນ ຫຼື ທຸລະກິດ ທີ່ໃຊ້ຜະລິດຕະພັນລາວ ໂດຍບໍ່ຜິດກັບລະບຽບຂອງອົງການການຄ້າໂລກ (WTO).

- ສືບຕໍ່ໃຫ້ນະໂຍບາຍຜ່ອນຜັນພາສີອາກອນແກ່ພາກທຸລະກິດໄປອີກໄລຍະໜຶ່ງ ແຕ່ເຮັດແບບຄ່ອຍໆເກັບຄືນເທື່ອລະກ້າວ ເພື່ອຫຼີກລ້ຽງການເກັບຫຼາຍບາດດຽວ. ໃນຂະນະດຽວກັນ, ຄວນຊຸກຍູ້ສົ່ງເສີມທຸລະກິດການຜະລິດ ໂດຍສະເໜີໃຫ້ມີການຄົ້ນຄວ້າຈັດປະເພດທຸລະກິດຂະໜາດໜ້ອຍ ແລະ ກາງ (SME) ເພື່ອສົ່ງເສີມການປ່ອຍສິນເຊື່ອໃຫ້ SME ຢ່າງມີຈຸດສຸມ ແລະ ມີປະສິດທິພາບ. ສົ່ງເສີມໃຫ້ມີການຈັດຕັ້ງກຸ່ມການຜະລິດ ລວມທັງຊຸກຍູ້ການສ້າງຕັ້ງບໍລິສັດຄໍ້າປະກັນສິນເຊື່ອ. ນອກນັ້ນ, ສະເໜີໃຫ້ຄົ້ນຄວ້າຫຼຸດຄ່າທຳນຽມເງິນກູ້ຕ່າງໆ ທີ່ເຮັດໃຫ້ຕົ້ນທຶນເງິນກູ້ພາກທຸລະກິດເພີ່ມຂຶ້ນ ເຊັ່ນ: ຄ່າທຳນຽມທີ່ຕິດພັນກັບທະບຽນສານ ແລະ ຄ່າທຳນຽມທີ່ຕິດພັນກັບທີ່ດິນທີ່ໃຊ້ເປັນຫຼັກຊັບຄໍ້າປະກັນ.
- ຄົ້ນຄວ້າມາດຕະການຊ່ວຍເຫຼືອ ແລະ ຟື້ນຟູ ບັນດາທຸລະກິດທີ່ຄາດວ່າຕ້ອງໃຊ້ເວລາດົນໃນການຟື້ນຕົວ ເປັນຕົ້ນແມ່ນ ທຸລະກິດການທ່ອງທ່ຽວໃນສະພາບການໃໝ່ນີ້ ໂດຍຫັນປ່ຽນຮູບແບບການທ່ອງທ່ຽວຈາກແບບເນັ້ນຈຳນວນຫຼາຍ (Mass Tourism) ມາເປັນຮູບແບບການທ່ອງທ່ຽວກຸ່ມນ້ອຍທີ່ມີຄຸນນະພາບສຳລັບນັກທ່ອງທ່ຽວພາຍໃນ. ສະນັ້ນ, ຂະແໜງການກ່ຽວຂ້ອງ ຄວນຄົ້ນຄວ້າຫາຮູບແບບການບໍລິການທີ່ເນັ້ນຄວາມສະອາດ, ຮັກສາສຸຂະພາບ, ເນັ້ນຄວາມເປັນສ່ວນຕົວ ແລະ ປອດໄພ ເປັນຕົ້ນ.
- ເອົາໃຈໃສ່ປັບປຸງການຈໍລະຈອນຂົນສົ່ງສິນຄ້າ ໃຫ້ໂລ່ງລ່ຽນເປັນປົກກະຕິ ເພື່ອຫຼີກລ້ຽງບັນຫາສິນຄ້າ ເຫຼືອ ບໍ່ພໍຢູ່ບາງແຂວງ.
- ສືບຕໍ່ ແລະ ເລັ່ງປັບປຸງສະພາບແວດລ້ອມການດຳເນີນທຸລະກິດ ໃຫ້ດີຂຶ້ນໂດຍໄວໃນເງື່ອນໄຂທີ່ຍັງມີການປິດດ່ານຊາຍແດນ ເພື່ອສາມາດດຶງດູດການລົງທຶນໃຫ້ຫຼາຍຂຶ້ນໃນຕໍ່ໜ້າ.
- ເລັ່ງພັດທະນາ ແລະ ປັບປຸງຄຸນນະພາບການໃຫ້ບໍລິການ ແລະ ພື້ນຖານໂຄງລ່າງດ້ານໂທລະຄົມມະນາຄົມ ແລະ ການສື່ສານ ຊຶ່ງການແຜ່ລະບາດຂອງພະຍາດ COVID-19 ໄດ້ເຮັດໃຫ້ໂລກ ກໍຄືປະເທດເຮົາກ້າວເຂົ້າຍຸກດິຈິຕອລ໌ ໄວຂຶ້ນ. ທັ້ງນີ້ ກໍເພື່ອເປັນການຊ່ວຍປະຢັດຄ່າໃຊ້ຈ່າຍໃນການຈັດປະຊຸມສຳມະນາ ແລະ ຝຶກອົບຮົມຕ່າງໆ ທັງພາກລັດ ແລະ ເອກະຊົນ ພ້ອມທັງຊຸກຍູ້ ແລະ ຮອງຮັບການຄ້າອອນລາຍ ທີ່ມີທ່າອ່ຽງເພີ່ມຂຶ້ນ.
- ເອົາໃຈໃສ່ເຝົ້າລະວັງ ແລະ ກະກຽມຮັບມືກັບໄພພິບັດທາງທຳມະຊາດ ທີ່ອາດກະທົບການຜະລິດ ໂດຍສະເພາະແມ່ນອຸທຸກກະໄພທີ່ອາດຈະເກີດຂຶ້ນໃນໄລຍະລະດູຝົນນີ້.

## 3.3 ເອົາໃຈໃສ່ບັນຫາສະຖຽນລະພາບເສດຖະກິດມະຫາພາກ

- ເອົາໃຈໃສ່ຕິດຕາມສະພາບຄ່ອງຂອງລະບົບທະນາຄານ ເພາະການຊະລໍຕົວຂອງເສດຖະກິດ ແລະ ການຟື້ນຕົວຊ້າຂອງທຸລະກິດເອກະຊົນ ໂດຍສະເພາະທຸລະກິດບໍລິການ ເຊັ່ນ: ບໍລິສັດທ່ອງທ່ຽວ, ໂຮງແຮມ ແລະ ຮ້ານອາຫານ ທີ່ໄດ້ກູ້ຢືມເງິນຈາກທະນາຄານ ອາດກະທົບຕໍ່ສະພາບຄ່ອງຂອງລະບົບທະນາຄານໃນ

ໄລຍະກາງ ເພາະມີຄວາມສ່ຽງເຮັດໃຫ້ເກີດມີໜີ້ເສຍ (NPL) ເພີ່ມຫຼາຍຂຶ້ນ ພາຍຫຼັງໄລຍະຜ່ອນຜັນ ການຈ່າຍດອກເບ້ຍ ແລະ ຕົ້ນທຶນ ໃນປີ 2020.

- ສືບຕໍ່ຕິດຕາມ ແລະ ປະເມີນ ການເໜັງຕີງຂອງອັດຕາແລກປ່ຽນຢ່າງໃກ້ຊິດ ໂດຍສົມທຽບກັບສະກຸນເງິນຂອງປະເທດພາກພື້ນທຽບໃສ່ໂດລາ ເພື່ອສະແດງໃຫ້ເຫັນສະຖານະພາບຂອງສະກຸນເງິນກີບໃນພາກພື້ນວ່າເສຍປຽບຫຼາຍໜ້ອຍປານໃດ. ຕິດຕາມການຊື້ຂາຍຕະຫຼາດເງິນຕາຢູ່ພາຍໃນ ແລະ ຫຼຸດຊ່ອງຫວ່າງຄວາມແຕກຕ່າງລະຫວ່າງ ອັດຕາແລກປ່ຽນໃນທະນາຄານ ແລະ ນອກທະນາຄານ.

**ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (ສຄສຊ)**
**ສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບໂຄງສ້າງເສດຖະກິດ**

ຫຼັກ 6, ຖະໜົນໄກສອນພົມວິຫານ
ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ
ໂທລະສັບ ແລະ ແຟັກ: + 856 21 713 033